CCM Secretariat

# ລາຍງານຜົນການເລືອກຕັ້ງ ສະມາຊິກ CCM

ກະກຽມ/ລາຍງານໂດຍ: ກອງເລຂາ CCM ແລະ ຄະນະກາມະການເລືອກຕັ້ງ

20 ພະຈິກ 2025

CCM Secretariat

# ຂະບວນການເລືອກຕັ້ງ

I. ເຫດຜົນ ແລະ ຂະບວນການຄັດເລືອກ
II. ການຄັດເລືອກສະມາຊິກ CCM
III. ຜົນການຈັດຕັ້ງປະຕິບັດຂອງຄະນະກຳມະການເລືອກຕັ້ງ (EC)
IV. ແຜນການຄັດເລືອກປະທານ, ຮອງປະທານ CCM ແລະ ຄະນະກາມະການຍ່ອຍຂອງ CCM
V. ການຮັບຮອງສະມາຊິກ CCM ໃໝ່

# I. ເຫດຜົນ ແລະ ຂະບວນການຄັດເລືອກ

- **ການປັບໂຄງສ້າງ:** ເກີດຈາກການປັບກົງຈັກການຈັດຕັ້ງຂອງລັດຖະບານ.
- **ການລວມກະຊວງ:** ໂດຍສະເພາະແມ່ນການກະຊວງພາຍໃນ ແລະ ກະຊວງແຜນການ ແລະ ການລົງທຶນ (ກະຊວງພາຍໃນ ຖືກລວມເຂົ້າກັບ ຫ້ອງວ່າການສໍານັກງານນາຍົກ ແລະ ຄະນະຈັດຕັ້ງສູນກາງພັກ; ກະຊວງແຜນການ ແລະ ການລົງທຶນ ຖືກຍລວມເຂົ້າກັບ ກະຊວງການເງິນ).
- **ສະມາຊິກເກົ່າຄົບວາລະ/ຍ້າຍອົງກອນ:** ອົງການ German Red Cross, Catholic Relief Services ໄດ້ຢຸດການເປັນສະມາຊິກ CCM, ໂຄງການເມດຕາທໍາ ໄດ້ໝົດວາລະ ແລະ ໄດ້ມີການປ່ຽນແທນສະມາຊິກໃໝ່ ຈາກ WHO.
- **ຜົນກະທົບ:** ເຮັດໃຫ້ອົງປະກອບຂອງ CCM ບໍ່ຄົບຖ້ວນຕາມຂໍ້ກໍານົດ.
- **ຂັ້ນຕອນແກ້ໄຂ:** ກອງເລຂາ CCM ແລະ ຄະນະກໍາມະການເລືອກຕັ້ງ (EC) ໄດ້ດໍາເນີນການຄັດເລືອກສະມາຊິກໃໝ່ ຕາມຄູ່ມືການຄັດເລືອກ CCM ປີ 2016.

# II. ການຄັດເລືອກສະມາຊິກ CCM

## 1. ຄຳແນະນຳຈາກທີມງານກອງທຶນໂລກ ວັນທີ 1 ຕຸລາ 2025

- ຂະບວນການຄັດເລືອກສະມາຊິກໃໝ່ ຕ້ອງຖືກຊີ້ນຳໂດຍ ຄະນະກຳມະການເລືອກຕັ້ງ ທີ່ໄດ້ຮັບການແຕ່ງຕັ້ງຈາກ CCM ຢ່າງໜ້ອຍ 3 ທ່ານ ເພື່ອຮັບປະກັນຄວາມໂປ່ງໃສ.
- ຄະນະກຳມະການເລືອກຕັ້ງ ຕ້ອງດຳເນີນການເລືອກຕັ້ງ ໂດຍອີງໃສ່ ຄູ່ມືການເລືອກຕັ້ງ CCM ປີ 2016 ທີ່ເຄີຍນຳໃຊ້ຜ່ານມາ.
- ການສະເໜີປັບປຸງຄູ່ມືການເລືອກຕັ້ງ ຕ້ອງໄດ້ຮັບການອະນຸມັດຈາກ CCM ກ່ອນ.
- **ບູລິມະສິດ 1:** ດຳເນີນການເລືອກຕັ້ງ ແລະ ຕໍ່ອາຍຸສະມາຊິກ CCM ໃຫ້ຄົບຖ້ວນສົມບູນກ່ອນ.
- **ບູລິມະສິດ 2:** ຈັດກອງປະຊຸມຄົບຄະນະສະເພາະກິດຂອງ CCM ເພື່ອຮັບຮອງສະມາຊິກໃໝ່, ຄັດເລືອກ ປະທານ ແລະ ຮອງປະທານ CCM.

# II. ການຄັດເລືອກສະມາຊິກ CCM (ຕໍ່)

## 2. ຈັດກອງປະຊຸມ Ad-hoc ExCom ແລະ OC ວັນທີ 9 ຕຸລາ 2025

- ❑ ປຶກສາຫາລືການປັບປຸງອົງປະກອບຂອງ CCM
- ❑ ວາງຕາຕະລາງເວລາ (Timeline) ໃນການເລືອກຕັ້ງສະມາຊິກໃໝ່
- ❑ ຄູ່ມືການເລືອກຕັ້ງສະມາຊິກ CCM
- ❑ ນຳສະເໜີຜົນຂອງການຕົກລົງຕໍ່ກອງປະຊຸມ CCM ຄັ້ງວັນທີ 10 ຕຸລາ 2025

# II. ການຄັດເລືອກສະມາຊິກ CCM (ຕໍ່)

## 2. ຈັດກອງປະຊຸມຄົບຄະນະ CCM ວັນທີ 10 ຕຸລາ 2025

- **ແຕ່ງຕັ້ງ ຄະນະກຳມະການເລືອກຕັ້ງ**

  1. ທ່ານ ປອ. ດຣ. ຄຳແພງ ຟອງລີຊາ, ປະທານ ຄະນະກຳມະການຄັດເລືອກ ແລະ ຕິດຕາມກວດກາ ຂອງ CCM, ຫົວໜ້າສະຖາບັນສາທາລະນະສຸກສາດ ແລະ ການແພດເຂດຮ້ອນ
  2. ທ່ານ ດຣ. ກາວິພອນ ສຸດທິ, ທີ່ປຶກສາ ມູນນິທິຮ່ວມໃຈພັດທະນາລາວ
  3. ທ່ານ Manav Bhattarai, ຊ່ຽວຊານອາວຸໂສດ້ານສຸຂະພາບ, ທະນາຄານໂລກ

# III. ຜົນການຈັດຕັ້ງປະຕິບັດຂອງຄະນະກໍາມະການເລືອກຕັ້ງ (EC)

**1. ຈັດປະຊຸມຮ່ວມລະຫວ່າງ ຄະນະກໍາມະການເລືອກຕັ້ງ ແລະ ກອງເລຂາ CCM ວັນທີ 16 ຕຸລາ 2025**

- ❑ ປຶກສາຫາລືກ່ຽວກັບການລິເລີ່ມຂະບວນການເລືອກຕັ້ງສະມາຊິກ CCM.
- ❑ ກໍານົດເວລາ (ແຜນວຽກ) ສໍາລັບການເລືອກຕັ້ງສະມາຊິກ CCM.

# III. ຜົນການຈັດຕັ້ງປະຕິບັດຂອງຄະນະກຳມະການເລືອກຕັ້ງ (EC) (ຕໍ່)

- **ຄະນະກຳມະການເລືອກຕັ້ງ ວິເຄາະ ແລະ ໄດ້ຕົກລົງສະເໜີເຊີນບັນດາກະຊວງ ແລະ ອົງການຈັດຕັ້ງທີ່ມີພາລະບົດບາດກ່ຽວກັບວຽກງານຕ້ານເອດ, ວັນນະໂລກ ແລະ ໄຂ້ຍຸງ ເພື່ອເຂົ້າຮ່ວມການເລືອກຕັ້ງ ສະມາຊິກ CCM:**

1. ກະຊວງສຶກສາທິການ ແລະ ກິລາ
2. ກະຊວງໂຍທາທິການ ແລະ ຂົນສົ່ງ
3. ກະຊວງວັດທະນະທຳ ແລະ ທ່ອງທ່ຽວ
4. ກະຊວງອຸດສາຫະກຳ ແລະ ການຄ້າ
5. ຄະນະຊາວໜຸ່ມປະຊາຊົນປະຕິວັດລາວ
6. ຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ
7. ຄະນະຈັດຕັ້ງສູນກາງພັກ
8. ຄະນະກຳມາທິການວັດທະນະທຳ-ສັງຄົມ, ສະພາແຫ່ງຊາດ

# III. ຜົນການຈັດຕັ້ງປະຕິບັດຂອງຄະນະກຳມະການເລືອກຕັ້ງ (EC) (ຕໍ່)

- **ຄະນະກຳມະການເລືອກຕັ້ງ ໄດ້ວາງຕາຕະລາງ (Timeline) ໃນການເລືອກຕັ້ງສະມາຊິກໃໝ່**
  - 17-23 ຕຸລາ 2025: ກອງເລຂາ CCM ກະກຽມບົດບັນທຶກກອງປະຊຸມ ແລະ ສົ່ງໃຫ້ ຄະນະກຳມະການ EC ປະກອບຄຳເຫັນ ແລະ ຢັ້ງຢືນຮັບຮອງ.
  - 24-30 ຕຸລາ 2025: ກອງເລຂາ CCM ກະກຽມ ໜັງສືເຊີນ ແລະ ສົ່ງໄປຍັງບັນດາກະຊວງ ແລະ ອົງການຈັດຕັ້ງທີ່ ຄະນະກຳມະການ EC ຄັດເລືອກໃນວັນທີ 16 ຕຸລາ.
  - 6 ພະຈິກ 2025: ຈັດກອງປະຊຸມຄະນະກຳມະການ EC ເພື່ອຄັດເລືອກ ບັນດາກະຊວງ ແລະ ອົງການຈັດຕັ້ງ.
  - 7-13 ພະຈິກ 2025: ກອງເລຂາ CCM ກະກຽມ ໜັງສືເຊີນ ແລະ ສົ່ງ ໄປຍັງ 2 ກະຊວງ/ອົງການຈັດຕັ້ງ ທີ່ຖືກເລືອກ ເພື່ອໃຫ້ແຕ່ງຕັ້ງຜູ້ຕາງໜ້າມາເປັນສະມາຊິກ CCM (ສະມາຊິກສົມບູນ 1 ທ່ານ ແລະ ສຳຮອງ 1 ທ່ານ).
  - 20 ພະຈິກ 2025: ຈັດກອງປະຊຸມຄົບຄະນະ CCM ສະເພາະກິດ (Ad-hoc CCM Plenary Meeting)
    - ຮັບຮອງເອົາ ສະມາຊິກສົມບູນ ແລະ ສຳຮອງຂອງ CCM ໃໝ່
    - ຄັດເລືອກ ປະທານ ແລະ ຮອງປະທານ CCM.

# III. ຜົນການຈັດຕັ້ງປະຕິບັດຂອງຄະນະກຳມະການເລືອກຕັ້ງ (EC) (ຕໍ່)

## 2. ຈັດປະຊຸມ ຄະນະກຳມະການເລືອກຕັ້ງ ວັນທີ 6 ພະຈິກ 2025

**2.1 ຜົນການຜູ້ເຂົ້າຮ່ວມ:**

- ຄະນະກຳມາທິການວັດທະນະທຳ-ສັງຄົມ ສະພາແຫ່ງຊາດ
- ຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ
- ຄະນະຈັດຕັ້ງສູນກາງພັກ
- ຄະນະສູນກາງຊາວໜຸ່ມ ປະຊາຊົນປະຕິວັດລາວ
- ກະຊວງໂຍທາທິການ ແລະ ຂົນສົ່ງ.
- ຕາງໜ້າຈາກ ມູນນິທິ Foundation Mérieux Laos
- ຕາງໜ້າຈາກ ໂຄງການເມດຕາທຳ
- ພະນັກງານ ກອງເລຂາ CCM 3 ທ່ານ

**2.2 ພາກສ່ວນທີ່ຂາດ:** ກະຊວງສຶກສາ, ກະຊວງວັດທະນະທຳ ແລະ ກະຊວງການຄ້າ.

# III. ຜົນການຈັດຕັ້ງປະຕິບັດຂອງຄະນະກຳມະການເລືອກຕັ້ງ (EC) (ຕໍ່)

## 2.3 ວາລະກອງປະຊຸມ

- ຄວາມເປັນມາ ແລະ ເຫດຜົນໃນການຄັດເລືອກ
- ຂັ້ນຕອນການຄັດເລືອກ ແລະ ຜົນການລົງຄະແນນສຽງ

# III. ຜົນການຈັດຕັ້ງປະຕິບັດຂອງຄະນະກຳມະການເລືອກຕັ້ງ (EC) (ຕໍ່)

## 2.4 ມະຕິຕົກລົງຂອງກອງປະຊຸມ ແລະ ຄຳຊີ້ນຳ ຂອງຄະນະກຳມະການເລືອກຕັ້ງ

**2.4.1 ຮັບຮອງຂະບວນການ:** ຢືນຢັນວ່າ ຄະນະກຳມະການເລືອກຕັ້ງ ໄດ້ປະຕິບັດການຄັດເລືອກຢ່າງຖືກຕ້ອງຕາມ ຂັ້ນຕອນ ແລະ ຫຼັກການທີ່ກຳນົດໄວ້ໃນ ຄູ່ມືການເລືອກຕັ້ງ CCM ປີ 2016.

**2.4.2 ມະຕິຕົກລົງ:**

- ຮັບຮອງເອົາ 2 ພາກສ່ວນລັດຖະບານ ໃໝ່ (ຄະນະຊາວໜຸ່ມ ປປລ ແລະ ຄະນະຈັດຕັ້ງສູນກາງພັກ),
- ຮັບຮອງເອົາການປ່ຽນແທນຕົວແທນຈາກ ອົງການອະນາໄມໂລກ, ໂຄງການເມດຕາທຳ ແລະ
- ຮັບຮອງເອົາ 2 ອົງກອນສາກົນໃໝ່ (ມູນນິທິ Foundation Mérieux Laos ແລະ ອົງການ Save the Children International Lao PDR).

# III. ຜົນການຈັດຕັ້ງປະຕິບັດຂອງຄະນະກຳມະການເລືອກຕັ້ງ (EC) (ຕໍ່)

## 2.4.3 ມອບໃຫ້ກອງເລຂາ CCM:

- ກະຊວງ ແລະ ສົ່ງໜັງສືສະເໜີຢ່າງເປັນທາງການໄປຍັງ ຄະນະຊາວໜຸ່ມ ແລະ ຄະນະຈັດຕັ້ງສູນກາງພັກ ເພື່ອໃຫ້ແຕ່ງຕັ້ງ ແລະ ສົ່ງລາຍຊື່ຜູ້ຕາງໜ້າ 2 ທ່ານ (ສະມາຊິກສົມບູນ 1 ທ່ານ ແລະ ສຳຮອງ 1 ທ່ານ ພາຍໃນ ວັນທີ 7-13 ພະຈິກ 2025).

- ກະຊວງຈັດກອງປະຊຸມຄົບຄະນະສະເພາະກິດ CCM ວັນທີ 20 ພະຈິກ 2025 ເພື່ອ:
  - ຮັບຮອງເອົາສະມາຊິກໃໝ່ (ສົມບູນ/ສຳຮອງ) ຢ່າງເປັນທາງການ.
  - ຄັດເລືອກ ປະທານ ແລະ ຮອງປະທານ CCM ຊຸດໃໝ່ ຢ່າງເປັນທາງການ.

# IV. ແຜນການຄັດເລືອກປະທານ, ຮອງປະທານ CCM ແລະ ສະມາຊິກຄະນະກຳມະການຍ່ອຍຂອງ CCM

- **ບູລິມະສິດ 1:** ດຳເນີນການເລືອກຕັ້ງ ແລະ ຕໍ່ອາຍຸສະມາຊິກ CCM ໃຫ້ຄົບຖ້ວນສົມບູນກ່ອນ.
- **ບູລິມະສິດ 2:** ຈັດກອງປະຊຸມຄົບຄະນະສະເພາະກິດຂອງ CCM ເພື່ອຮັບຮອງສະມາຊິກໃໝ່, ຄັດເລືອກ ປະທານ ແລະ ຮອງປະທານ CCM.
- ໃຫ້ພາກລັດຖະບານ, ອົງການຮ່ວມມືຫຼາຍຝ່າຍ-ສອງຝ່າຍ ແລະ ອົງການຈັດຕັ້ງທີ່ບໍ່ສັງກັດລັດ ຄັດເລືອກລາຍຊື່ຕາງໜ້າເຂດເລືອກຕັ້ງລະ 1 ທ່ານ ເພື່ອເຂົ້າຄັດເລືອກປະທານ ແລະ ຮອງປະທານ
- ໃຫ້ສະມາຊິກ CCM ທັງໝົດ ລົງຄະແນນສຽງແບບປິດລັບ (Secret Ballot Voting)
- ຄະນະກຳມະການເລືອກຕັ້ງ ສະຫຼຸບຄະແນນ ແລະ ປະກາດຜົນຕໍ່ກອງປະຊຸມແບບໂປ່ງໃສ
- ພາຍຫຼັງຄັດເລືອກປະທານ ແລະ ຮອງປະທານ CCM ແລ້ວ, ໃຫ້ CCM ທັງໝົດ ລົງຄະແນນສຽງແບບປິດລັບເພື່ອຄັດເລືອກສະມາຊິກຄະນະກຳມະການ OC, RMC ແລະ ປະທານ RMC
- ກອງເລຂາ CCM ອຳນວຍຄວາມສະດວກພິທີການຄັດເລືອກ

# V. ການຮັບຮອງສະມາຊິກ CCM ໃໝ່

- **ຄະນະກຳມະການເລືອກຕັ້ງ:** ຂໍຢືນຢັນວ່າ ຄະນະກຳມະການເລືອກຕັ້ງ ໄດ້ປະຕິບັດການຄັດເລືອກຢ່າງຖືກຕ້ອງຕາມຂັ້ນຕອນ ແລະ ຫຼັກການທີ່ກຳນົດໄວ້ໃນ ຄູ່ມືການເລືອກຕັ້ງ CCM ປີ 2016.
- **ຄະນະກຳມະການເລືອກຕັ້ງ:** ໄດ້ວິເຄາະ ແລະ ກວດກາຂໍ້ມູນຂອງ ສະມາຊິກໃໝ່ທັງໝົດແລ້ວ ບໍ່ມີຂໍ້ຂັດແຍ່ງດ້ານຜົນປະໂຫຍດໃດໆ ທີ່ອາດຈະເປັນຜົນກະທົບຕໍ່ການປະຕິບັດວຽກງານຂອງ CCM.
- **ຄະນະກຳມະການເລືອກຕັ້ງ:** ສະເໜີໃຫ້ຄະນະກຳມະການ CCM ທັງໝົດ ພິຈາລະນາ ແລະ ຮັບຮອງເອົາສະມາຊິກໃໝ່ ຢ່າງເປັນທາງການ.

# ຄະນະກຳມະການເລືອກຕັ້ງ (Election Committee – EC)

# ຂໍຂອບໃຈ